

# ການຄຸ້ມກັນຫລັງຈາກການຖືພາຕັ້ງທ້ອງ (APC)

ການຄຸ້ມກັນຫລັງຈາກການຖືພາຕັ້ງທ້ອງ (APC) ຂອງ Apple Health (Medicaid) ສະເໜີການບໍລິການເພື່ອຈະອູ້ມຊູຄວາມຢູ່ດີມີແຮງທາງຈິດໃຈ, ຮ່າງກາຍ,ແລະຄວາມຮູ້ສຶກເປັນເວລາ 12 ເດືອນຫລັງຈາກການຖືພາຕັ້ງທ້ອງ.

## ສະວັດດີການແລະການບໍລິການ

APC ສະເໜີການປິ່ນປົວຕິດຕາມມາຫລັງຈາກກຳເນີດໃຫ້ແລະເອົາການບໍລິການປິ່ນປົວສຸຂະພາບເພີ້ມເຕີມໃຫ້ອີກໂດຍບໍ່ຄິດຄ່າຕໍ່ທ່ານ.ສະວັດດີການລວມເອົາການປິ່ນປົວແຂ້ວ,ການຄຸມກຳເນີດ,ການປິ່ນປົວປ້ອງກັນ,ສຸຂະພາບການປະພຶດ,ແລະການບໍລິການແນວອື່ນທີ່ຖືກຄຸ້ມກັນໂດຍ Apple Health. ຖ້າຫາກວ່າທ່ານມີສິດໄດ້ຮັບ,ການຄຸ້ມກັນຈະຍາວນານເຖິງ 12 ເດືອນຫລັງຈາກທີ່ການຖືພາຕັ້ງທ້ອງຂອງທ່ານສິ້ນສຸດລົງບໍ່ກ່ຽວກັບການປ່ຽນແປງໃນລາຍໄດ້.

ແວ່ປ້ຽມ **hca.wa.gov/apple-health-services** ເພື່ອຈະຮຽນຮູ້ວ່າການບໍລິການແນວໃດແດ່ທີ່ຖືກຄຸ້ມກັນພາຍໃຕ້ Apple Health.

## ຂ້ອຍມີເງື່ອນໄຂໄດ້ຮັບບໍ່?

ເພື່ອຈະມີເງື່ອນໄຂໄດ້ຮັບໂຄງການ **APC** ທ່ານຕ້ອງ:

- ໄດ້ຖືພາຕັ້ງທ້ອງພາຍໃນ 12 ເດືອນຜ່ານມາ.
- ອາສັຍຢູ່ໃນຣັດວໍຊິງຕັນ.
- ມີລາຍໄດ້ປະຈຳເດືອນທີ່ສອດຄ່ອງນຳມາດຕະຖານທີ່ຖືກບົ່ງຢູ່ດ້ານຫລັງ.
- ບໍ່ມີເງື່ອນໄຂໄດ້ຮັບໂຄງການະປປລເຫເາລທຣໂຄງການອື່ນ.

ສະພາບການເຂົ້າເມືອງບໍ່ສະທ້ອນເຖິງເງື່ອນໄຂຮັບເອົາ. ຮຽນຮູ້ເພີ້ມເຕີມຢູ່ທີ່ **hca.wa.gov/apc.**

Washington Apple Health

Washington State Health Care Authority

## ຂ້ອຍສາມາດຫາເງິນໄດ້ຫລາຍທີ່ສຸດຕໍ່ເດືອນເທົ່າໃດເພື່ອຈະມີສິດໄດ້ຮັບ?

| ຄົນດຽວ | ຄອບຄົວ 2 ຄົນ | ຄອບຄົວ 3 ຄົນ |
|---|---|---|
| **$2,804** ຕໍ່ເດືອນຕໍ່ເດືອນ | **$3,790** ຕໍ່ເດືອນຕໍ່ເດືອນ | **$4,775** ຕໍ່ເດືອນຕໍ່ເດືອນ |
| **ຄອບຄົວ 4 ຄົນ** | **ຄອບຄົວ 5 ຄົນ** | **ຄອບຄົວ 6 ຄົນ** |
| **$5,760** ຕໍ່ເດືອນຕໍ່ເດືອນ | **$6,747** ຕໍ່ເດືອນຕໍ່ເດືອນ | **$7,731** ຕໍ່ເດືອນຕໍ່ເດືອນ |

## ທ່ານຖືພາຕັ້ງທ້ອງແລະມີການຄຸ້ມກັນ **Apple Health** ແລ້ວບໍ່?

ຖ້າຫາກວ່າທ່ານມີການຄຸ້ມກັນ Apple Health ແລ້ວ,ທ່ານຈະມີການຜັນປ່ຽນຕໍ່ມາໄປຫາ APC ເມື່ອເວລາທ່ານລັດແປງສະພາບຂອງການຖືພາຕັ້ງທ້ອງຂອງທ່ານ.

- ຖ້າຫາກວ່າທ່ານມີການຄຸ້ມກັນຜ່ານ Washington Healthplanfinder ,ທຳການປ່ຽນແປງຢູ່ທີ່ **wahealthplanfinder.org**.
- ຖ້າຫາກວ່າທ່ານຖືກຄຸ້ມກັນໂດຍ Apple Health Classic Medicaid (ອາຍຸ 65 ປີຫລືແກ່ກວ່າ,ຫລືມີຕາບອດຫລືຄວາມເສັຽອົງຄະ) ທຳການປ່ຽນແປງຢູ່ທີ່ **washingtonconnection.org**.

## ທ່ານໄດ້ຖືພາຕັ້ງທ້ອງໃນ 12 ເດືອນຜ່ານມາບໍ່ແລະບໍ່ມີການຄຸ້ມກັນ **Apple Health** ບໍ່?

ທ່ານອາດຈະມີເງື່ອນໄຂໄດ້ຮັບ **APC.** ຮ້ອງຂໍເອົາດຽວນີ້!

- ທາງອອນລາຍນ໌:ໄປທີ່ **wahealthplanfinder.org** - ເລືອກເອົາປຸ່ມ "Apply Now".
- ທາງແອບ໌ມືຖື:ດາວໂຫລດແອບ໌ WAPlanfinder app.
- ທາງໂທຣະສັບ:ໂທຫາ Washington Healthplanfinder ໄດ້ທີ່ເລກ 1-855-923-4633.
- ທາງເຈັ້ຽເອກສານ:ດາວໂຫລດແອບ໌ໄດ້ທີ່ **hca.wa.gov/health-care-application**.
- ໂດຍຕົນເອງ:ແຫລ່ງຊ່ວຍເຫລືອທ້ອງຖິ່ນຜູ້ທີ່,ໂດຍບໍ່ມີຄ່າເພີ້ມເຕີມ,ສາມາດຊ່ວຍທ່ານຮ້ອງຂໍເອົາການຄຸ້ມກັນສຸຂະພາບ.
    - **wahealthplanfinder.org** - ຊອກຫາຜູ້ຊີ້ນຳແນວທາງຜ່ານລິງຄ໌ປະຊາຊົມພັນ.



ຖ້າຫາກວ່າທ່ານຕ້ອງການການອຳນວຍຄວາມສະດວກ,ຫລືຕ້ອງການເອກສານໃນແບບຮູບຮ່າງຫລືພາສາອື່ນ,ກະຣຸນາໂທຫາ 1-800-562-3022 (TRS: 711)